ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ ເລກທີ 138 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 10 ສິງຫາ 2020

# ລັດຖະດຳລັດ
# ຂອງປະທານປະເທດ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
### ກ່ຽວກັບການປະກາດໃຊ້ກົດໝາຍ ວ່າດ້ວຍພາສີ (ສະບັບປັບປຸງ)

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 04 /ສພຊ, ລົງວັນທີ 29 ມິຖຸນາ 2020 ກ່ຽວກັບການຮັບຮອງເອົາກົດໝາຍ ວ່າດ້ວຍພາສີ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 07/ຄປຈ, ລົງວັນທີ 13 ກໍລະກົດ 2020.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ກົດໝາຍ ວ່າດ້ວຍພາສີ (ສະບັບປັບປຸງ).

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ບຸນຍັງ ວໍລະຈິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 04 / ສພຊ
ນະຄອນຫຼວງວຽງຈັນ, ວັນທີ 29 / 06 / 20

# ມະຕິ
## ຂອງກອງປະຊຸມສະພາແຫ່ງຊາດ
## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍພາສີ (ສະບັບປັບປຸງ)

ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2015) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍພາສີ (ສະບັບປັບປຸງ) ໃນວາລະກອງປະຊຸມ ຄັ້ງວັນທີ 29 ມິຖຸນາ 2020.

## ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍພາສີ (ສະບັບປັບປຸງ) ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນ ສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 81 /ສພຊ
ນະຄອນຫຼວງວຽງຈັນ, ວັນທີ 29 ມິຖຸນາ 2020

# ກົດໝາຍວ່າດ້ວຍພາສີ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 (ປັບປຸງ) ຈຸດປະສົງ

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ການນຳເຂົ້າ-ສົ່ງອອກ, ການຜ່ານແດນ, ການເຄື່ອນຍ້າຍ ສິນຄ້າ, ເຄື່ອງຂອງ, ຍານພາຫະນະ, ຜູ້ໂດຍສານ ຜ່ານດ່ານພາສີຊາຍແດນ ເພື່ອອຳນວຍຄວາມສະດວກທາງດ້ານພາສີ ແລະ ການຄ້າ, ສົ່ງເສີມການລົງທຶນ ແລະ ການເຊື່ອມໂຍງ, ເຊື່ອມຈອດ ກັບສາກົນ, ແນໃສ່ສ້າງຄວາມເຂັ້ມແຂງໃຫ້ລັດຖະການພາສີ, ເກັບລາຍຮັບເຂົ້າງົບປະມານແຫ່ງລັດ ຢ່າງຖືກຕ້ອງ, ຄົບຖ້ວນ, ທັນເວລາ, ປົກປ້ອງຜົນປະໂຫຍດ ຂອງຜູ້ປະກອບການ, ຄວາມປອດໄພຂອງສັງຄົມ ແລະ ຄວາມໝັ້ນຄົງຂອງຊາດ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

### ມາດຕາ 2 (ປັບປຸງ) ພາສີ

ພາສີ ແມ່ນ ພັນທະເປັນເງິນທີ່ມອບໃຫ້ລັດ ໂດຍບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນການນຳເຂົ້າ-ສົ່ງອອກ, ການຜ່ານແດນ, ການເຄື່ອນຍ້າຍສິນຄ້າ, ເຄື່ອງຂອງ ຜ່ານດ່ານຊາຍແດນ ຕາມອັດຕາທີ່ໄດ້ກຳນົດໄວ້ໃນ ປຶ້ມສາລະບານສິນຄ້າ ແລະ ອັດຕາພາສີ ແລະ ກົດໝາຍ.

### ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ລັດຖະການພາສີ** ໝາຍເຖິງ ກົມພາສີ, ພາສີປະຈຳ ແຂວງ, ນະຄອນຫຼວງ ແລະ ການຈັດຕັ້ງອື່ນຂອງພາສີ ທີ່ຂຶ້ນກັບກະຊວງການເງິນ, ມີຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ ຢ່າງລວມສູນເປັນເອກະພາບໃນຂອບເຂດທົ່ວປະເທດ;

2. **ເຈົ້າຂອງສິນຄ້າ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຜູ້ທີ່ມີກຳມະສິດໂດຍກົງຕໍ່ສິນຄ້າ, ເຄື່ອງຂອງ ທີ່ນຳເຂົ້າ-ສົ່ງອອກ, ຜ່ານແດນ, ເຄື່ອນຍ້າຍ ແລະ ເກັບຮັກສາ ສິນຄ້າ, ເຄື່ອງຂອງ ໃນລະບົບສາງ;

3. **ລາຍເຊັນເອເລັກໂຕຣນິກ** ໝາຍເຖິງ ລາຍເຊັນຂອງເຈົ້າຂອງສິນຄ້າ, ເຄື່ອງຂອງ ຫຼື ຜູ້ແຈ້ງພາສີ ທີ່ໄດ້ເຊັນລົງໃນໃບແຈ້ງພາສີທາງເອເລັກໂຕຣນິກ ຊຶ່ງຖືກຮັບຮອງ ໂດຍລັດຖະການພາສີ ໃນການແຈ້ງພາສີ ຜ່ານລະບົບເອເລັກໂຕຣນິກ ແລະ ລະບົບອື່ນ ທີ່ໄດ້ກຳນົດໄວ້ໃນລະບຽບການທາງພາສີ;

4. **ການມາເຖິງຂອງສິນຄ້າ** ໝາຍເຖິງ ສິນຄ້າທີ່ນຳເຂົ້າຈາກຕ່າງປະເທດມາເຖິງດ່ານພາສີຊາຍແດນຂອງ ສປປ ລາວ ທີ່ໄດ້ກຳນົດໄວ້, ລະບົບສາງ ຫຼື ສະຖານທີ່ອື່ນ ທີ່ລັດຖະການພາສີກຳນົດໄວ້ ເພື່ອດຳເນີນການຕາມລະບຽບການທາງພາສີ;

5. **ການອອກໄປຂອງສິນຄ້າ** ໝາຍເຖິງ ສິນຄ້າທີ່ເຄື່ອນຍ້າຍອອກຈາກດ່ານພາສີຊາຍແດນຂອງສປປ ລາວ ທີ່ໄດ້ກຳນົດໄວ້ ພາຍຫຼັງສຳເລັດການດຳເນີນການຕາມລະບຽບການທາງພາສີ;

6. **ສິນຄ້າຜ່ານແດນ** ໝາຍເຖິງ ສິນຄ້າ ທີ່ປະເທດສົ່ງອອກໄປເຖິງປະເທດນຳເຂົ້າໃດໜຶ່ງ ໂດຍຜ່ານດິນແດນຂອງ ສປປ ລາວ ຕາມລະບຽບການ;

7. **ການຖ່າຍຖ່າຍສິນຄ້າ** ໝາຍເຖິງ ການຍົກຍ້າຍເອົາ ສິນຄ້າ, ເຄື່ອງຂອງ ຈາກຍານພາຫະນະຂົນສົ່ງໜຶ່ງ ໄປຍັງຍານພາຫະນະຂົນສົ່ງອື່ນ;

8. **ສິນຄ້າປະເພດຄວບຄຸມ** ໝາຍເຖິງ ສິນຄ້າທີ່ຕ້ອງໄດ້ຮັບອະນຸຍາດໃຫ້ ນຳເຂົ້າ-ສົ່ງອອກ, ເຄື່ອນຍ້າຍ, ເກັບຮັກສາ ຕາມລະບຽບການສະເພາະ;

9. **ສິນຄ້າປະເພດເກືອດຫ້າມ** ໝາຍເຖິງ ສິນຄ້າທີ່ບໍ່ອະນຸຍາດໃຫ້ນຳເຂົ້າ-ສົ່ງອອກ, ຂົນສົ່ງຜ່ານແດນ, ເກັບຮັກສາ ແລະ ເຄື່ອນຍ້າຍ ຕາມກົດໝາຍ ເປັນຕົ້ນ ອາວຸດເສິກ, ສານເສບຕິດ;

10. **ໂລຊິດສະຕິກ (Logistics)** ໝາຍເຖິງ ລະບົບການຄຸ້ມຄອງບໍລິຫານຢ່າງເປັນຕ່ອງໂສ້ຂອງຂະບວນການເຄື່ອນຍ້າຍສິນຄ້າ ທີ່ມີການວາງແຜນ, ການຄວບຄຸມ, ການເກັບຮັກສາ, ການຫຸ້ມຫໍ່, ການຖ່າຍຖ່າຍ, ການຂົນສົ່ງ, ການບໍລິການ ແລະ ການສະໜອງຂໍ້ມູນ ຂ່າວສານທີ່ກ່ຽວຂ້ອງ ທີ່ມີປະສິດທິພາບ ແລະ ປະສິດທິຜົນ ຈາກຕົ້ນທາງໄປຍັງປາຍທາງ ຕາມຄວາມຕ້ອງການຂອງລູກຄ້າ;

11. **ລານຕູ້ສິນຄ້າ** ໝາຍເຖິງ ສະຖານທີ່ເກັບຮັກສາ ແລະ ສ້ອມແປງຕູ້ສິນຄ້າ ຫຼື ບ່ອນຄັດແຍກສິນຄ້າ ໃຫ້ເຈົ້າຂອງຕາມທຸລະກຳທາງການຄ້າ;

12. **ການເກັບຮັກສາສິນຄ້າ** ໝາຍເຖິງ ການເກັບມ້ຽນສິນຄ້າໃນລະບົບສາງ ຫຼື ສະຖານທີ່ໃດໜຶ່ງ ຕາມລະບຽບການຄຸ້ມຄອງສາງ ເພື່ອລໍຖ້າການແຈ້ງພາສີເປັນລາຍລະອຽດ;

13. **ການຍຶດສິນຄ້າ, ຍານພາຫະນະ** ໝາຍເຖິງ ການຮັກສາສິນຄ້າ, ຍານພາຫະນະໄວ້ຊົ່ວຄາວເພື່ອລໍຖ້າຜົນຂອງການດຳເນີນຄະດີ;

14. **ການອາຍັດ ສິນຄ້າ, ຍານພາຫະນະ** ໝາຍເຖິງ ການຮັກສາສິນຄ້າ, ຍານພາຫະນະໄວ້ຊົ່ວຄາວຢູ່ສະຖານທີ່ຂອງຜູ້ຖືກຫາ ຫຼື ສາງພາສີ ໂດຍຫ້າມຊື້ ຂາຍ, ໂອນ ຫຼື ຈຳນຳ, ຈຳນອງ ຫຼື ຄ້ຳປະກັນ ເພື່ອລໍຖ້າຜົນຂອງການພິສູດ ຫຼື ຜົນຂອງການດຳເນີນຄະດີ;

15. **ການຮິບ ສິນຄ້າ, ເຄື່ອງຂອງ** ໝາຍເຖິງ ການເອົາສິນຄ້າ, ເຄື່ອງຂອງ ທີ່ເປັນຂອງກາງໃນການກະທຳຜິດທາງພາສີ ມາເປັນຂອງລັດ ຕາມຄຳຕັດສິນຂອງສານ;

**16. ດ່ານພາສີຊາຍແດນ** ໝາຍເຖິງ ດ່ານພາສີສາກົນ, ດ່ານພາສີທ້ອງຖິ່ນ ແລະ ດ່ານພາສີປະເພນີ ທີ່ອະນຸຍາດໃຫ້ນໍາເຂົ້າ-ສົ່ງອອກສິນຄ້າ, ເຄື່ອງຂອງ, ຍານພາຫະນະ ແລະ ຜູ້ໂດຍສານ ຕາມກົດໝາຍ;

**17. ການງົດເກັບພາສີ** ໝາຍເຖິງ ການບໍ່ຈ່າຍ ພາສີ ສໍາລັບສິນຄ້າທີ່ໄດ້ຮັບອະນຸຍາດໃຫ້ນໍາເຂົ້າເປັນການຊົ່ວຄາວ ພາຍໃຕ້ເງື່ອນໄຂທີ່ສິນຄ້າເຫຼົ່ານັ້ນ ຕ້ອງໄດ້ຖືກສົ່ງອອກຄືນ ຕາມກໍານົດເວລາ;

**18. ສິນຄ້າ** ໝາຍເຖິງ ຜະລິດຕະພັນ ທີ່ມີມູນຄ່າທາງເສດຖະກິດ ຊຶ່ງຖືກນໍາເຂົ້າ, ສົ່ງອອກ ແລະ ຜ່ານແດນ ເພື່ອຈຸດປະສົງການຜະລິດ, ປຸງແຕ່ງ, ຊົມໃຊ້ ແລະ ຈໍາໜ່າຍ ຕາມທີ່ໄດ້ກໍານົດໄວ້ໃນປຶ້ມສາລະບານສິນຄ້າ ແລະ ອັດຕາພາສີ ລະບົບເອກະພາບ;

**19. ເຄື່ອງຂອງ** ໝາຍເຖິງ ຜະລິດຕະພັນ ທີ່ມີ ຫຼື ບໍ່ມີ ມູນຄ່າທາງເສດຖະກິດ ຊຶ່ງຖືກນໍາເຂົ້າ ແລະ ສົ່ງອອກ ເພື່ອຈຸດປະສົງການນໍາໃຊ້ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;

**20. ຜູ້ປະກອບການມາດຕະຖານເອອີໂອ (Authorized Economic Operator- AEO)** ໝາຍເຖິງ ຜູ້ປະກອບການດີເດັ່ນ ໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ;

**21. ລະບອບພາສີ** ໝາຍເຖິງ ການນໍາໃຊ້ລະຫັດໃນການແຈ້ງພາສີເປັນລາຍລະອຽດ ທີ່ຕິດພັນກັບການນໍາເຂົ້າ, ສົ່ງອອກ, ການຜ່ານແດນ, ການເຄື່ອນຍ້າຍ, ການເກັບຮັກສາສິນຄ້າ ແລະ ເຄື່ອງຂອງ;

**22. ສາລະບານສິນຄ້າ ແລະ ອັດຕາພາສີ** ໝາຍເຖິງ ສາລະບານລະບົບເອກະພາບ ທີ່ກໍານົດເລກລະຫັດສິນຄ້າ ຕາມຫຼັກການຂອງອົງການພາສີໂລກ ແລະ ອັດຕາພາສີ ຂອງ ສປປ ລາວ ແລະ ຕາມຂອບສັນຍາການຄ້າເສລີ ທີ່ ສປປ ລາວ ເປັນພາຄີ;

**23. ທ່າບົກ (Dry Port)** ໝາຍເຖິງ ສະຖານີຄ່ຽນຖ່າຍສິນຄ້າ ພາຍໃນ ແລະ ຕ່າງປະເທດ ຂອງເຂດໂລຊິດສະຕິກ ຊຶ່ງເຊື່ອມກັບໜຶ່ງ ຫຼື ຫຼາຍຮູບແບບການຂົນສົ່ງ ເພື່ອຄວບຄຸມ, ເກັບຮັກສາ ແລະ ກວດກາຄວາມຖືກຕ້ອງຂອງສິນຄ້າທີ່ເຄື່ອນຍ້າຍ ໃຫ້ສອດຄ່ອງກັບລະບົບການຄ້າສາກົນ ໂດຍເຈົ້າໜ້າທີ່ພາສີ ແລະ ເຈົ້າໜ້າທີ່ອື່ນທີ່ກ່ຽວຂ້ອງ.

**ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດກ່ຽວກັບວຽກງານພາສີ**

ລັດ ສ້າງສະພາບແວດລ້ອມທີ່ດີ ໃຫ້ແກ່ຜູ້ປະກອບການໃນການດໍາເນີນທຸລະກິດນໍາເຂົ້າ-ສົ່ງອອກ, ການຜ່ານແດນ, ການເຄື່ອນຍ້າຍ ແລະ ເກັບຮັກສາສິນຄ້າ.

ລັດ ຊຸກຍູ້, ສົ່ງເສີມ ວຽກງານພາສີດ້ວຍການກໍານົດ ນະໂຍບາຍ, ລະບຽບການ, ສະໜອງງົບປະມານ, ປະກອບບຸກຄະລາກອນ, ຍານພາຫະນະ ແລະ ວັດຖຸປະກອນ ທີ່ຈໍາເປັນສໍາລັບການເຄື່ອນໄຫວວຽກງານພາສີ ໃຫ້ ມີປະສິດທິພາບ ແລະ ປະສິດທິຜົນ.

ລັດ ພັດທະນາບຸກຄະລາກອນຂອງລັດຖະການພາສີ ໃຫ້ມີຄວາມຮູ້, ຄວາມສາມາດ, ສັດຊື່, ໂປ່ງໃສ, ເປັນຜູ້ຊໍານານງານໃນການຄຸ້ມຄອງ ແລະ ບໍລິຫານ ວຽກງານພາສີ ໃຫ້ມີຄວາມເຂັ້ມແຂງ ແລະ ທັນສະໄໝ.

ລັດ ຊຸກຍູ້ ແລະ ອໍານວຍຄວາມສະດວກ ໃຫ້ຜູ້ປະກອບການປະຕິບັດພັນທະຂອງຕົນ ໃນການເສຍພາສີ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 5 (ໃໝ່) ການອໍານວຍຄວາມສະດວກທາງພາສີ**

ລັດ ອໍານວຍຄວາມສະດວກທາງພາສີ ດ້ວຍການກໍານົດກົນໄກ, ສ້າງສິ່ງອໍານວຍຄວາມສະດວກຕ່າງໆ ເຊັ່ນ ສະໜອງ ຂໍ້ມູນ ຂ່າວສານ, ເຄື່ອງມືທີ່ທັນສະໄໝ, ບຸກຄະລາກອນທີ່ມີຄວາມຮູ້, ຄວາມສາມາດ ເພື່ອບໍລິການໃຫ້ສອດຄ່ອງກັບມາດຕະຖານຂອງສາກົນ ແລະ ຕາມກົດໝາຍ.

ລັດ ໃຫ້ບູລິມະສິດຄວາມສະດວກທາງດ້ານພາສີ ແກ່ຜູ້ປະກອບການມາດຕະຖານເອອີໂອ, ຜູ້ລົງທຶນທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງ ຍ້າຍຖານການຜະລິດເຂົ້າມາ ສປປ ລາວ.

**ມາດຕາ 6 (ໃໝ່) ການບໍລິການເຊື່ອມໂຍງ ເຊື່ອມຈອດ**

ລັດ ນຳໃຊ້ທ່າແຮງທີ່ຕັ້ງພູມສາດຂອງປະເທດ ທີ່ເປັນຈຸດໃຈກາງໃນພາກພື້ນ ເພື່ອຮັບປະກັນດ້ານວຽກງານພາສີໃນການຕອບສະໜອງ ການບໍລິການລະບົບໂລຊິດສະຕິກ, ກຳນົດນະໂຍບາຍ, ກົນໄກ ແລະ ລະບຽບການ ເພື່ອອຳນວຍຄວາມສະດວກໃນການເຊື່ອມໂຍງ ເຊື່ອມຈອດ ດ້ວຍລະບົບທັນສະໄໝ ໃຫ້ມີຄວາມວ່ອງໄວ, ປອດໄພ, ທັນເວລາ ແລະ ມີປະສິດທິຜົນ.

**ມາດຕາ 7 (ໃໝ່) ການພັດທະນາວຽກງານພາສີເປັນທັນສະໄໝ**

ລັດ ໃຫ້ຄວາມສຳຄັນແກ່ການພັດທະນາວຽກງານພາສີໃຫ້ເປັນທັນສະໄໝ ເພື່ອຄຸ້ມຄອງກິດຈະການ ຈັດຕັ້ງ ແລະ ພະນັກງານ, ສ້າງລະບົບ, ກົນໄກ, ວິທີການຄຸ້ມຄອງ, ຂັ້ນຕອນການບໍລິຫານ, ການບໍລິການ ລວມທັງການນຳໃຊ້ເຄື່ອງມື ໃນການເກັບກຳ ແລະ ຮັກສາຂໍ້ມູນ ກ່ຽວກັບວຽກງານພາສີ ໃຫ້ຖືກຕ້ອງ, ຄົບຖ້ວນ, ໂປ່ງໃສ ແລະ ສາມາດກວດສອບໄດ້.

ລັດ ຊຸກຍູ້, ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ລົງທຶນ, ມີສ່ວນຮ່ວມພັດທະນາ ແລະ ນຳໃຊ້ ເຕັກໂນໂລຊີ ທາງທຸລະກຳການຄ້າ ແລະ ການແຈ້ງພາສີ ໃຫ້ທັນສະໄໝ, ມີປະສິດທິພາບ ແລະ ປະສິດທິຜົນ.

**ມາດຕາ 8 (ປັບປຸງ) ຫຼັກການເຄື່ອນໄຫວກ່ຽວກັບວຽກງານພາສີ**

ໃນການເຄື່ອນໄຫວວຽກງານພາສີ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແຕ່ລະໄລຍະ;
2. ຄຸ້ມຄອງລວມສູນ ຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ;
3. ອຳນວຍຄວາມສະດວກທາງພາສີ ເພື່ອສົ່ງເສີມການລົງທຶນ, ການຜະລິດ, ການຄ້າ, ການບໍລິການ ຕາມກົດໝາຍ;
4. ຮັບປະກັນການມີສ່ວນຮ່ວມ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງ;
5. ບໍລິການວ່ອງໄວ, ທັນສະໄໝ, ຖືກຕ້ອງ, ຄົບຖ້ວນ, ຍຸຕິທຳ, ໂປ່ງໃສ ແລະ ກວດສອບໄດ້ຕາມກົດໝາຍ;
6. ປະສານສົມທົບກັບ ກະຊວງ, ອົງການ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;
7. ສອດຄ່ອງກັບ ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 9 (ປັບປຸງ) ສິນຄ້າ, ເຄື່ອງຂອງ ທີ່ຕ້ອງເສຍພາສີ**

ສິນຄ້າ, ເຄື່ອງຂອງ ທີ່ນຳເຂົ້າ-ສົ່ງອອກ ສປປ ລາວ ລວມທັງ ສິນຄ້າ, ເຄື່ອງຂອງ ທີ່ຈັດຊື້ດ້ວຍງົບປະມານຂອງລັດ ຕ້ອງໄດ້ເສຍພາສີ ຕາມອັດຕາທີ່ໄດ້ກຳນົດໄວ້ໃນກົດໝາຍ, ເວັ້ນເສຍແຕ່ກໍລະນີ ງົດເກັບ ຫຼື ຍົກເວັ້ນພາສີ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນການ ກ່ຽວກັບການນຳເຂົ້າ-ສົ່ງອອກ ສິນຄ້າ, ເຄື່ອງຂອງ ຕ້ອງເສຍພາສີ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້.

**ມາດຕາ 10 (ໃໝ່) ການປະສານສົມທົບກ່ຽວກັບວຽກງານພາສີ**

ລັດ ຊຸກຍູ້ໃຫ້ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ, ພາກລັດ ແລະ ເອກະຊົນ ຮ່ວມມື ແລະ ປະສານສົມທົບໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

ຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ ຕ້ອງມີຄວາມຮັບຜິດຊອບຮ່ວມກັນແກ້ໄຂສິ່ງກີດຂວາງ, ອຸດຕັນ ໃນການນຳເຂົ້າ-ສົ່ງອອກສິນຄ້າ, ການຜ່ານແດນ, ການເຄື່ອນຍ້າຍສິນຄ້າ, ເຄື່ອງຂອງ, ການເຂົ້າ-ອອກຂອງຍານພາຫະນະ ແລະ ຜູ້ໂດຍສານ ຜ່ານດ່ານພາສີຊາຍແດນ, ສະກັດກັ້ນ ແລະ ຕ້ານ ການຄ້າຂາຍເຖື່ອນ.

**ມາດຕາ 11 (ໃໝ່) ພັນທະຂອງພົນລະເມືອງຕໍ່ການສະກັດກັ້ນການລັກລອບຫຼົບຫຼີກພາສີ**

ພົນລະເມືອງທຸກຄົນ ມີພັນທະໃນການຕິດຕາມ, ສະໜອງຂໍ້ມູນ ຂ່າວສານ, ລາຍງານ ແລະ ໃຫ້ການຮ່ວມມືແກ່ເຈົ້າໜ້າທີ່ພາສີ ໃນການສະກັດກັ້ນ ແລະ ປາບປາມການລັກລອບຫຼົບຫຼີກພາສີ, ການຄ້າຂາຍເຖື່ອນ ແລະ ການລະເມີດອື່ນກ່ຽວກັບພາສີ.

**ມາດຕາ 12 (ໃໝ່) ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເຄື່ອນໄຫວກ່ຽວກັບການນຳເຂົ້າ-ສົ່ງອອກ, ການຜ່ານແດນ, ການເຄື່ອນຍ້າຍ, ການເກັບຮັກສາສິນຄ້າ, ເຄື່ອງຂອງ, ການເຂົ້າ-ອອກຂອງຍານພາຫະນະ ແລະ ຜູ້ໂດຍສານ ຜ່ານດ່ານພາສີຊາຍແດນ ແລະ ວຽກງານອື່ນກ່ຽວກັບພາສີ ຢູ່ ສປປ ລາວ.

**ມາດຕາ 13 (ປັບປຸງ) ການຮ່ວມມືສາກົນ**

ລັດ ເປີດກວ້າງ ແລະ ສົ່ງເສີມໃຫ້ມີການພົວພັນ, ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານພາສີ ດ້ວຍການແລກປ່ຽນ ບົດຮຽນ, ຂໍ້ມູນ ຂ່າວສານ, ເຕັກນິກ, ເຕັກໂນໂລຊີ, ການຝຶກອົບຮົມ, ການຍົກລະດັບພະນັກງານ ແລະ ປະຕິບັດຕາມ ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

# ພາກທີ II

# ລະບຽບການທາງພາສີ ແລະ ການແຈ້ງພາສີ

## ໝວດທີ 1

## ລະບຽບການທາງພາສີ

**ມາດຕາ 14 (ປັບປຸງ) ລະບຽບການທາງພາສີ**

ລະບຽບການທາງພາສີ ແມ່ນ ບົດບັນຍັດທີ່ກຳນົດອອກ ເພື່ອຄຸ້ມຄອງ, ຕິດຕາມ ກວດກາ ການນຳເຂົ້າ-ສົ່ງອອກ, ການຜ່ານແດນ, ການເຄື່ອນຍ້າຍ, ການເກັບຮັກສາສິນຄ້າ, ການເຂົ້າ-ອອກ ຂອງຍານພາຫະນະ ແລະ ຜູ້ໂດຍສານ ຜ່ານດ່ານພາສີຊາຍແດນ ແລະ ພາຍໃນອານາເຂດພາສີ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້.

ສິນຄ້າ, ເຄື່ອງຂອງ ທຸກຊະນິດ ລວມທັງສິນຄ້າງົດເກັບ ຫຼື ຍົກເວັ້ນພາສີ ທີ່ນຳເຂົ້າ-ສົ່ງອອກ, ການຜ່ານແດນ, ການເຄື່ອນຍ້າຍ ຕ້ອງໄດ້ດຳເນີນຕາມລະບຽບການທາງພາສີ.

**ມາດຕາ 15 (ປັບປຸງ) ມູນຄ່າແຈ້ງພາສີສົ່ງອອກ**

ມູນຄ່າແຈ້ງພາສີສົ່ງອອກ (Customs Valuation for Export) ແມ່ນ ມູນຄ່າຕົວຈິງຂອງສິນຄ້າ, ເຄື່ອງຂອງ ລວມທັງຄ່າຂົນສົ່ງ, ຄ່າປະກັນໄພ (ຖ້າມີ) ແລະ ຄ່າໃຊ້ຈ່າຍອື່ນທີ່ກ່ຽວຂ້ອງ ຮອດດ່ານພາສີຊາຍແດນບ່ອນສົ່ງອອກ ຫຼື ບ່ອນລັດຖະການພາສີກຳນົດ.

**ມາດຕາ 16 (ປັບປຸງ) ມູນຄ່າແຈ້ງພາສີນຳເຂົ້າ**

ມູນຄ່າແຈ້ງພາສີນຳເຂົ້າ (Customs Valuation for Import) ແມ່ນ ມູນຄ່າຕົວຈິງຂອງສິນຄ້າ, ເຄື່ອງຂອງ ລວມທັງຄ່າຂົນສົ່ງ ແລະ/ຫຼື ຄ່າປະກັນໄພ ແລະ ຄ່າໃຊ້ຈ່າຍອື່ນທີ່ກ່ຽວຂ້ອງ (ຖ້າມີ) ທີ່ສົ່ງຮອດດ່ານພາສີຊາຍແດນບ່ອນນຳເຂົ້າ ຫຼື ສະຖານທີ່ບ່ອນສິນຄ້າມາເຖິງ ໂດຍສອດຄ່ອງກັບມາດຕາ 7 ຂອງຂໍ້ຕົກລົງທົ່ວໄປວ່າດ້ວຍອັດຕາພາສີ ແລະ ການຄ້າ (General Agreement on Tariffs and Trade-GATT 1994) ຂອງອົງການການຄ້າໂລກ ມີ ດັ່ງນີ້:

1. ການກຳນົດມູນຄ່າແຈ້ງພາສີ ດ້ວຍການນຳໃຊ້ມູນຄ່າສິນຄ້າ ຊື້ ຂາຍ;
2. ການກຳນົດມູນຄ່າແຈ້ງພາສີ ດ້ວຍການນຳໃຊ້ມູນຄ່າສິນຄ້າ ຊື້ ຂາຍ ທີ່ຄືກັນ;
3. ການກຳນົດມູນຄ່າແຈ້ງພາສີ ດ້ວຍການນຳໃຊ້ມູນຄ່າສິນຄ້າ ຊື້ ຂາຍ ທີ່ຄ້າຍຄືກັນ;
4. ການກຳນົດມູນຄ່າແຈ້ງພາສີ ດ້ວຍວິທີຫັກລົບມູນຄ່າ;
5. ການກຳນົດມູນຄ່າແຈ້ງພາສີ ດ້ວຍວິທີຄຳນວນ;
6. ການກຳນົດມູນຄ່າແຈ້ງພາສີ ດ້ວຍວິທີຍ້ອນຄືນທີ່ສົມເຫດສົມຜົນ.

ກະຊວງການເງິນ ເປັນຜູ້ອອກລະບຽບການ ກ່ຽວກັບຫຼັກການປະເມີນມູນຄ່າແຈ້ງພາສີນຳເຂົ້າ.

**ມາດຕາ 17 (ປັບປຸງ) ການຈັດເລກລະຫັດ ສິນຄ້າ, ເຄື່ອງຂອງ**

ການຈັດເລກລະຫັດ ສິນຄ້າ, ເຄື່ອງຂອງ ທຸກຊະນິດທີ່ນຳເຂົ້າ-ສົ່ງອອກ, ຂົນສົ່ງຜ່ານແດນ, ເຄື່ອນຍ້າຍ ແມ່ນ ການກຳນົດເລກລະຫັດສິນຄ້າ ເພື່ອເປັນພື້ນຖານໃຫ້ແກ່ການຄິດໄລ່ຄ່າພາສີ, ການປະຕິບັດ

ນະໂຍບາຍຄຸ້ມຄອງສິນຄ້າ ແລະ ສະຖິຕິສິນຄ້າ. ການຈັດເລກລະຫັດສິນຄ້າ ຕ້ອງອີງໃສ່ເອກະສານທາງພາສີ, ເອກະສານດ້ານເຕັກນິກ ແລະ ຂໍ້ມູນອື່ນທີ່ກ່ຽວຂ້ອງກັບສິນຄ້າ ເພື່ອກຳນົດຊື່ ແລະ ເລກລະຫັດສິນຄ້າ.

ການກຳນົດເລກລະຫັດສິນຄ້າ ສຳລັບສິນຄ້າປະເພດຄວບຄຸມ ແລະ ເກືອດຫ້າມ ຂະແໜງການກ່ຽວຂ້ອງຕ້ອງສົມທົບກັບລັດຖະການພາສີ ໃນການຈັດເລກລະຫັດສິນຄ້າໃຫ້ຖືກຕ້ອງ, ສອດຄ່ອງກັບເນື້ອໃນລາຍລະອຽດຂອງສິນຄ້າ ທີ່ມີເລກລະຫັດເຄົ້າ ແລະ ເລກລະຫັດຍ່ອຍ ຕາມທີ່ກຳນົດໃນສາລະບານສິນຄ້າລະບົບເອກະພາບ.

ເຈົ້າຂອງສິນຄ້າ ຫຼື ຜູ້ແຈ້ງພາສີ ມີພັນທະ ແຈ້ງສິນຄ້າ, ເຄື່ອງຂອງ ຕາມເລກລະຫັດ ຂອງແຕ່ລະປະເພດສິນຄ້າ, ເຄື່ອງຂອງ ທີ່ໄດ້ກຳນົດໄວ້ໃນສາລະບານສິນຄ້າລະບົບເອກະພາບ ໂດຍສອດຄ່ອງກັບສາລະບານສິນຄ້າລະບົບເອກະພາບຂອງອົງການພາສີໂລກ ແລະ ອາຊຽນ.

ໃນເວລາກວດກາສິນຄ້າຕົວຈິງ, ເຈົ້າໜ້າທີ່ພາສີ ຕ້ອງກວດກາເລກລະຫັດສິນຄ້າ ຕາມເອກະສານແຈ້ງພາສີ, ຜົນການກວດກາສິນຄ້າ ຫຼື ຜົນການວິເຄາະ, ວິໄຈ ແລະ ການປະເມີນສິນຄ້າຕົວຈິງ. ກໍລະນີຜູ້ແຈ້ງພາສີຈັດສິນຄ້າບໍ່ຖືກຕ້ອງຕາມເລກລະຫັດສິນຄ້າ, ເຈົ້າໜ້າທີ່ພາສີ ສາມາດເກັບຕົວຢ່າງໄປວິໄຈ ເພື່ອກຳນົດເລກລະຫັດສິນຄ້າດັ່ງກ່າວໃຫ້ຖືກຕ້ອງ. ໃນກໍລະນີຜູ້ແຈ້ງພາສີ ຫາກເຫັນວ່າການຈັດເລກລະຫັດສິນຄ້າດັ່ງກ່າວບໍ່ຖືກຕ້ອງຕາມລະບຽບການທີ່ລັດກຳນົດອອກ ກໍສາມາດສະເໜີເຈົ້າໜ້າທີ່ພາສີ ພິຈາລະນາຄືນ.

ກະຊວງການເງິນ ມີໜ້າທີ່ປະສານສົມທົບກັບອົງການທີ່ກ່ຽວຂ້ອງ ໃນການສະໜອງຂໍ້ມູນກ່ຽວກັບການຈັດເລກລະຫັດ ແຕ່ລະປະເພດສິນຄ້າ, ເຄື່ອງຂອງທຸກຊະນິດ ທີ່ນຳເຂົ້າ-ສົ່ງອອກ, ຂົນສົ່ງຜ່ານແດນ, ເຄື່ອນຍ້າຍ ໃນແຕ່ລະໄລຍະ.

## ມາດຕາ 18 (ປັບປຸງ) ແຫຼ່ງກຳເນີດສິນຄ້າ

ແຫຼ່ງກຳເນີດສິນຄ້າ ແມ່ນ ການຢັ້ງຢືນແຫຼ່ງທີ່ມາຂອງສິນຄ້າຈາກ ປະເທດທີ່ໄດ້ຂຸດຄົ້ນ, ຜະລິດ ຫຼື ຜ່ານຂະບວນການຜະລິດ ຫຼື ປຸງແຕ່ງສິນຄ້າ, ການກຳນົດທາງດ້ານປະລິມານຂອງສ່ວນປະກອບ ຕາມລະບຽບການທີ່ໄດ້ກຳນົດໄວ້ ໂດຍສອດຄ່ອງກັບລະບຽບການຂອງການນຳໃຊ້ສາລະບານສິນຄ້າລະບົບເອກະພາບຂອງອົງການພາສີໂລກ ແລະ ອາຊຽນ.

ການນຳໃຊ້ແຫຼ່ງກຳເນີດສິນຄ້າ ແມ່ນ ການຢັ້ງຢືນປະເທດຕົ້ນກຳເນີດຂອງແຫຼ່ງສິນຄ້າ ແລະ ການໄດ້ຮັບສິດທິພິເສດໃນການຫຼຸດຜ່ອນອັດຕາພາສີ ກັບບັນດາປະເທດທີ່ລັດຖະບານ ແຫ່ງ ສປປ ລາວ ໄດ້ຮ່ວມລົງນາມ ແລະ ເປັນພາຄີ.

## ມາດຕາ 19 (ໃໝ່) ການກວດກາແຫຼ່ງກຳເນີດສິນຄ້າ

ການກວດກາແຫຼ່ງກຳເນີດສິນຄ້າ ໃຫ້ປະຕິບັດ ດັ່ງນີ້:

1. ສຳລັບສິນຄ້າສົ່ງອອກ ໃຫ້ປະຕິບັດໃນເວລາ ປະເທດນຳເຂົ້າສະເໜີມາ, ເຈົ້າໜ້າທີ່ພາສີ ຕ້ອງປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອກວດກາ ໂດຍອີງໃສ່ແບບພິມແຈ້ງພາສີ, ເອກະສານປະກອບການແຈ້ງພາສີ ເປັນລາຍລະອຽດ, ຜົນການກວດກາສິນຄ້າຕົວຈິງ, ຂະບວນການຜະລິດ ແລະ ສ່ວນປະກອບຂອງສິນຄ້າ. ໃນເວລາລໍຖ້າຜົນການກວດກາແຫຼ່ງກຳເນີດສິນຄ້າ ເຈົ້າໜ້າທີ່ພາສີສາມາດອະນຸຍາດໃຫ້ສົ່ງອອກສິນຄ້າກ່ອນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 38 ຂອງກົດໝາຍສະບັບນີ້;

2. ສຳລັບສິນຄ້ານຳເຂົ້າ ເຈົ້າໜ້າທີ່ພາສີ ຕ້ອງກວດກາ ໂດຍອີງໃສ່ແບບພິມແຈ້ງພາສີ, ເອກະສານປະກອບການແຈ້ງພາສີ ເປັນລາຍລະອຽດ, ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ແລະ ຜົນການກວດກາສິນຄ້າຕົວຈິງ. ໃນກໍລະນີມີຂໍ້ສົງໄສຕໍ່ແຫຼ່ງກຳເນີດສິນຄ້າ, ເຈົ້າໜ້າທີ່ພາສີ ຕ້ອງສົມທົບກັບຂະແໜງການທີ່ກ່ຽວຂ້ອງກວດ

ກາແຫຼ່ງກຳເນີດສິນຄ້າຢູ່ປະເທດຜະລິດສິນຄ້າ ພາຍໃຕ້ເງື່ອນໄຂຂອງສົນທິສັນຍາທີ່ ສປປ ລາວ ເຂົ້າເປັນພາຄີ. ຜົນການກວດກາມີຜົນໃຊ້ບັງຄັບທາງກົດໝາຍສຳລັບການຢັ້ງຢືນແຫຼ່ງກຳເນີດສິນຄ້າ. ໃນເວລາລໍຖ້າຜົນກວດກາແຫຼ່ງກຳເນີດສິນຄ້າ, ຜູ້ແຈ້ງພາສີສາມາດນຳສິນຄ້າເຂົ້າໄດ້ ຕາມທີ່ກຳນົດໄວ້ໃນມາດຕາ 38 ຂອງກົດໝາຍສະບັບນີ້ ແຕ່ຈະບໍ່ໄດ້ຮັບສິດທິພິເສດດ້ານອັດຕາພາສີ.

ສຳລັບ ຂັ້ນຕອນ, ວິທີການ ແລະ ກຳນົດເວລາ ໃນການກວດກາແຫຼ່ງກຳເນີດສິນຄ້າ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 20 (ໃໝ່) ຫີບຫໍ່ ແລະ ພາຊະນະບັນຈຸ ສິນຄ້າ**

ຫີບຫໍ່ ແລະ ພາຊະນະບັນຈຸ ສິນຄ້າ ທີ່ນຳເຂົ້າ ຫຼື ສົ່ງອອກ ຕ້ອງມີເຄື່ອງໝາຍ ແລະ ເລກໝາຍສະເພາະ ຕາມມາດຕະຖານສາກົນ, ບໍ່ໃຫ້ໂຮມເອົາຫຼາຍຊະນິດສິນຄ້າ ທີ່ແຕກຕ່າງກັນເຂົ້າໃນຫີບຫໍ່ດຽວ ແລະ ບໍ່ໃຫ້ມີການດັດແປງພາຊະນະບັນຈຸສິນຄ້າ.

ສຳລັບ ສິນຄ້ານຳເຂົ້າ ຕ້ອງຕິດສະຫຼາກເປັນພາສາລາວ ໃສ່ຫີບຫໍ່ ແລະ ພາຊະນະບັນຈຸ ຕາມລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 21 (ໃໝ່) ການມາເຖິງ ແລະ ການອອກໄປ ຂອງສິນຄ້າ**

ການມາເຖິງ ແລະ ການອອກໄປ ຂອງສິນຄ້າ ມີ ດັ່ງນີ້:

1. ການມາເຖິງຂອງສິນຄ້ານຳເຂົ້າທາງນ້ຳ ຈະສິ້ນສຸດ ເມື່ອເຮືອບັນທຸກສິນຄ້າເຂົ້າມາຈອດທຽບທ່າເຮືອ ທີ່ລັດຖະການພາສີກຳນົດ ແລະ ຂົນສິນຄ້າອອກຈາກເຮືອສຳເລັດ, ສຳລັບການອອກໄປຂອງສິນຄ້າ ຈະສິ້ນສຸດ ເມື່ອເຮືອບັນທຸກສິນຄ້າໄດ້ອອກຈາກທ່າເຮືອຂອງ ສປປ ລາວ;

2. ການມາເຖິງຂອງສິນຄ້ານຳເຂົ້າທາງບົກ ຈະສິ້ນສຸດ ເມື່ອຍານພາຫະນະຂົນສົ່ງສິນຄ້າໄດ້ມາເຖິງດ່ານຊາຍແດນ ແລະ ຂົນສິນຄ້າຈາກຍານພາຫະນະລົງສາງ ຫຼື ສະຖານທີ່ ທີ່ລັດຖະການພາສີກຳນົດ, ສຳລັບການອອກໄປຂອງສິນຄ້າ ຈະສິ້ນສຸດ ເມື່ອຍານພາຫະນະຂົນສົ່ງສິນຄ້າ ອອກຈາກດ່ານຊາຍແດນຂອງ ສປປ ລາວ;

3. ການມາເຖິງຂອງສິນຄ້ານຳເຂົ້າທາງອາກາດ ຈະສິ້ນສຸດ ເມື່ອເຮືອບິນຂົນສົ່ງສິນຄ້າ ຫຼື ເຮືອບິນສ່ວນຕົວ ໄດ້ມາເຖິງສະໜາມບິນທີ່ມີດ່ານພາສີຕັ້ງຢູ່, ສຳລັບການອອກໄປຂອງສິນຄ້າ ຈະສິ້ນສຸດ ເມື່ອເຮືອບິນໄດ້ບິນອອກຈາກສະໜາມບິນທີ່ມີດ່ານພາສີຕັ້ງຢູ່ເປັນຈຸດສຸດທ້າຍ ຂອງ ສປປ ລາວ;

4. ການມາເຖິງຂອງສິນຄ້ານຳເຂົ້າທາງລົດໄຟ ຫຼື ທາງລາງ ຈະສິ້ນສຸດ ເມື່ອຂະບວນລົດໄຟຂົນສົ່ງສິນຄ້າ ໄດ້ມາເຖິງສະຖານີ ບ່ອນມີດ່ານພາສີຕັ້ງຢູ່ ຫຼື ສະຖານທີ່ ທີ່ລັດຖະການພາສີກຳນົດໄວ້ ເພື່ອເອົາສິນຄ້າລົງສາງ. ສຳລັບການອອກໄປຂອງສິນຄ້າ ຈະສິ້ນສຸດ ເມື່ອຂະບວນລົດດັ່ງກ່າວໄດ້ອອກຈາກສະຖານີສຸດທ້າຍ ທີ່ມີດ່ານພາສີຕັ້ງຢູ່ ແລະ ອອກຈາກຊາຍແດນຂອງ ສປປ ລາວ;

5. ການມາເຖິງຂອງສິນຄ້ານຳເຂົ້າທາງໄປສະນີ ຈະສິ້ນສຸດ ເມື່ອໄດ້ເປີດກ່ອງສິນຄ້າ, ພັດສະດຸພັນ ແລະ ຖົງເມທາງໄປສະນີ ທີ່ຫ້ອງການໄປສະນີ ທີ່ມີເຈົ້າໜ້າທີ່ພາສີປະຈຳຢູ່ ຫຼື ສະຖານທີ່ ທີ່ລັດຖະການພາສີກຳນົດ. ສຳລັບການອອກໄປຂອງສິນຄ້າ ຈະສິ້ນສຸດ ເມື່ອໄດ້ປິດກ່ອງສິນຄ້າ, ພັດສະດຸພັນ ແລະ ຖົງເມທາງໄປສະນີ ແລະ ໄດ້ດຳເນີນການສົ່ງອອກໄປຕາມເນື້ອໃນຂໍ້ 1, 2, 3 ຫຼື 4 ຂອງມາດຕານີ້ ແລ້ວແຕ່ກໍລະນີ;

6. ການມາເຖິງສິນຄ້ານຳເຂົ້າທາງທໍ່, ສາຍສົ່ງ ຫຼື ທາງອື່ນທີ່ຄ້າຍຄຽງ ຈະສິ້ນສຸດເມື່ອສິນຄ້າສົ່ງຜ່ານທາງດັ່ງກ່າວໄດ້ມາເຖິງສະຖານທີ່ ຫຼື ບ່ອນທີ່ຂະແໜງການກ່ຽວຂ້ອງກຳນົດ ແລະ ສຳເລັດການມອບ ສົ່ງ